

ໃນຕອນແລງຂອງວັນທີ 22 ທັນວາ 2020 ທີ່ຫ້ອງປະຊຸມໃຫ່ຍ, ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໄດ້ຈັດພິທີປະກາດການແຕ່ງຕັ້ງ ຄະນະສະພາບໍລິຫານ ແລະ ຄະນະຜູ້ອຳນວຍການ ລັດວິສາຫະກິດ ພັດທະນາທ່າເຮືອ ຫວຸ້ງອ່າງ ລາວ-ຫວຸ່ງດນາມ ຂຶ້ນຢ່າງເປັນທາງການ. ເປັນກຽດເຂົ້າຮ່ວມໃນພິທີປະກາດການແຕ່ງຕັ້ງຄັ້ງນີ້ ມີ ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ ຮອງລັດຖະມົນຕີ ກະຊວງການເງິນ, ທ່ານ ຄຳເຜີຍ ແກ້ວກົມນາລີ ຮອງລັດຖະມົນຕີ ກະຊວງ ແຜນການ ແລະ ການລົງທຶນ ທັງເປັນຮອງປະທານຄະນະກຳມາທິການຮ່ວມມືລາວ-ຫວຸ່ງດນາມ, ທ່ານ ອາລຸນແກ້ວ ກິດຕິຄຸນ ອະດີດລັດຖະມົນຕີ ປະຈຳສຳນັກງານນາຍົກລັດຖະມົນຕີ ທັງເປັນ ປະທານກຳມະການຍຸດທະສາດ ແລະ ການວາງແຜນ ບໍລິສັດ ພີທີແອວ ໂຮນດິ້ງ ຈຳກັດ, ທ່ານ ສີລາວົງແກ້ວ ອະດີດຮອງລັດຖະມົນຕີ ກະຊວງການເງິນ ທັງເປັນທີ່ປຶກສາອາວຸໂສ ບໍລິສັດ ວົງຈັນ ໂລຊິດສະຕິກ ພາກ ຈຳກັດ, ທ່ານ ປະສົມເພັດ ຄຳຕັນ ປະທານ ສະພາບໍລິຫານ, ທ່ານ ຈັນທອນ ສິດທິໄຊ ປະທານກຸ່ມບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ ທັງເປັນ ຮອງປະທານສະພາບໍລິຫານ ພ້ອມດ້ວຍບັນດາທ່ານຄະນະສະພາບໍລິຫານ, ຄະນະຜູ້ອຳນວຍການ ລັດວິສາຫະກິດ ພັດທະນາທ່າເຮືອ ຫວຸ້ງອ່າງ ລາວ-ຫວຸ່ງດນາມ ພ້ອມດ້ວຍບັນດາທ່ານຫົວໜ້າ ຫ້ອງການ, ຫົວໜ້າກົມ ຂອງກະຊວງທີ່ກ່ຽວຂ້ອງ ແລະ ທ່ານຜູ້ບໍລິຫານບັນດາບໍລິສັດໃນເຄືອ ລວມທັງໝົດ 50 ກວ່າທ່ານ.

ໃນພິທີ ທ່ານ ອຸໄທ ອິນທິລາດ ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ, ກະຊວງການເງິນ ໄດ້ຂຶ້ນຜ່ານຂໍ້ຕົກລົງ ຂອງລັດຖະມົນຕີກະຊວງການເງິນ ແລະ ຂອງປະທານ ບໍລິສັດ ປີໂຕຣລ້ຽມ ເທຣດດິ້ງ ລາວ ມະຫາຊົນ ວ່າດ້ວຍການແຕ່ງຕັ້ງຄະນະສະພາບໍລິຫານ ແລະ ຄະນະຜູ້ອຳນວຍການ ລັດວິສາຫະກິດ ພັດທະນາທ່າເຮືອ ຫວຸ້ງອ່າງ ລາວ-ຫວຸ່ງດນາມ. ຜູ້ເຂົ້າຮ່ວມພິທີປະກາດການແຕ່ງຕັ້ງ

ໄດ້ຮັບຟັງການໂອ້ລົມ ຈາກທ່ານ ປອ. ບຸນເຫຼືອ ສົມໄຊວໍຣະວົງ ຮອງລັດຖະມົນຕີ ກະຊວງການເງິນ, ຊຶ່ງທ່ານກໍໄດ້ສະແດງ ຄວາມຍ້ອງຍໍຊົມເຊີຍ ໃນການປະກອບສ່ວນທັງເຫື່ອແຮງ ແລະ ສະຕິປັນຍາ ຂອງທຸກພາກສ່ວນທີ່ກ່ຽວຂ້ອງເຮັດໃຫ້ ລັດວິສາຫະກິດ ພັດທະນາທ່າເຮືອ ຫວຸ້ງອ່າງ ລາວ-ຫວຽດນາມ ໄດ້ຮັບການຮັບຮອງ ແລະ ອະນຸມັດຈາກລັດຖະບານໃຫ້ດຳເນີນທຸລະກິດຢ່າງເປັນທາງການ. ພ້ອມກັນນັ້ນ ທ່ານກໍ່ໄດ້ສະແດງ ຄວາມຍິນດີ ແລະ ຍ້ອງຍໍຊົມເຊີຍຄະນະສະພາບໍລິຫານ ແລະ ຄະນະຜູ້ອຳນວຍການ ລັດວິສາຫະກິດ ພັດທະນາທ່າເຮືອ ຫວຸ້ງອ່າງ ລາວ-ຫວຽດນາມ ທີ່ໄດ້ຮັບຄວາມເຊື່ອໝັ້ນ ແລະ ໄວ້ວາງໃຈຈາກລັດຖະບານ ຊຶ່ງກຸ່ມບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໃຫ້ເປັນແກນນຳຫຼັກໃນການຂັບເຄື່ອນການດຳເນີນທຸລະກິດ ຂອງ ລັດວິສາຫະກິດ ພັດທະນາທ່າເຮືອ ຫວຸ້ງອ່າງ ລາວ-ຫວຽດນາມໃນຄັ້ງນີ້.



ໃນຕອນທ້າຍ ທ່ານໄດ້ກ່າວວ່ານີ້ເປັນພຽງຜົນສຳເລັດໃນເບື້ອງຕົ້ນ ຂອງການສ້າງຕັ້ງລັດວິສາຫະກິດ ແລະ ແຕ່ງຕັ້ງຄະນະຜູ້ບໍລິຫານຂອງແຕ່ລະຝ່າຍ ຊຶ່ງໃນຕໍ່ໄປບັນດາທ່ານທີ່ຖືກແຕ່ງຕັ້ງຈະຕ້ອງໄດ້ປະຊຸມ ແລະປຶກສາຫາລືກັນເພື່ອວາງແຜນຍຸດທະສາດໃນການດຳເນີນທຸລະກິດ ແລະ ຫັນແຜນຍຸດທະສາດດັ່ງກ່າວໃຫ້ເປັນແຜນການອັນລະອຽດເພື່ອນຳ ໄປຈັດຕັ້ງປະຕິບັດໃຫ້ເກີດດອກອອກຜົນ. ທ່ານໄດ້ຮຽກຮ້ອງມາຍັງບັນດາທ່ານຄະນະສະພາບໍລິຫານ, ຄະນະຜູ້ອຳນວຍການ ແລະ ພະນັກງານ ຂອງລັດວິສາຫະກິດ ພັດທະນາ ທ່າເຮືອ ຫວຸ້ງອ່າງ ລາວ-ຫວຽດນາມໃຫ້ທຸ້ມເທໝົດສະຕິປັນຍາ ແລະ ເຫື່ອແຮງເຂົ້າໃນການປະຕິບັດໜ້າທີ່ ທີ່ຖືກມອບ ໝາຍໃຫ້ປະສົບຜົນສຳເລັດຕາມແຜນການທີ່ວາງໄວ້.

ທ່ານ ສີລາ ວຸງແກ້ວ ອະດີດຮອງລັດຖະມົນຕີກະຊວງການເງິນ ທີ່ປຶກສາອາວຸໂສ ບໍລິສັດ ວຸງຈັນ ໂລຊິດສະຕິກ ພາກ ຈຳກັດ) ໄດ້ຕາງໜ້າຄະນະສະພາບໍລິຫານ ແລະ ຄະນະຜູ້ອຳນວຍການ ລັດວິສາຫະກິດ ພັດທະນາທ່າເຮືອ ຫວຸ້ງອ່າງ ລາວ-ຫວຸງດນາມ ຂຶ້ນມີຄຳເຫັນ ຊຶ່ງມີບາງຕອນທ່ານໄດ້ ກ່າວວ່າ ໂດຍປະຕິບັດຕາມເຈດຕະນາລົມ ຂອງສອງພັກ ແລະ ສອງລັດຖະບານລາວ ແລະ ຫວຸງດນາມ ແລະ ເພື່ອສືບຕໍ່ຈັດຕັ້ງຜັນຂະຫຍາຍສັນຍາ ລະຫວ່າງ ລັດຖະບານ ລາວ ແລະ ລັດຖະບານ ຫວຸງດນາມ ວ່າດ້ວຍການຮ່ວມມືພັດທະນາທ່າທຽບເຮືອ 1, 2 ແລະ 3 ຂອງ ທ່າເຮືອຫວຸ້ງ-ອ່າງ ລະຫວ່າງ 2 ພັກ 2 ລັດລາວ-ຫວຸງດນາມ, ລັດວິສາຫະກິດ ພັດທະນາ ທ່າເຮືອ ຫວຸ້ງອ່າງ ລາວ-ຫວຸງດນາມໄດ້ຮັບການສ້າງຕັ້ງຂຶ້ນ ໂດຍການເຫັນດີຂອງ ລັດຖະບານ ແຫ່ງ ສປປ ລາວ, ໃນວັນທີ 26 ກຸມພາ 2019 ໃບທະບຽນວິສາຫະກິດ ເລກທີ 0269/ຈທວ ແລະ ໃບອະນຸຍາດດຳເນີນທຸລະກິດ ເລກທີ 13088/ຍທຂ.ກຜຮ, ລົງວັນທີ 10 ມີຖຸນາ 2019 ໂດຍມີ ຈຸດປະສົງເພື່ອພັດທະນາ ທ່າເຮືອ ຫວຸ້ງອ່າງ ໃຫ້ກາຍເປັນທ່າເຮືອນ້ຳເລິກ ສາມາດຂົນສົ່ງ ສິນຄ້າ ແບບເທກອງ ແລະ ຕູ້ຄອນເທນເນີ, ບໍລິການໄດ້ທັງເຮືອບັນທຸກຂະໜາດນ້ອຍ ແລະ 5.000 ໂຕນ ຈົນເຖິງຂະໜາດໃຫຍ່ 100.000 ໂຕນ, ຮອງຮັບການບໍລິການຕູ້ຄອນເທນເນີ້ຈາກເດີມ 50.000 ຕູ້ ໃຫ້ໄດ້ເຖິງ 1.200.000 ຕູ້, ສຳລັບສິນຄ້າເທກອງຈາກເດີມ 3 ລ້ານໂຕນ ໃຫ້ໄດ້ 20 ລ້ານໂຕນ ໃນປີ 2030.



ລັດວິສາຫະກິດ ພັດທະນາທ່າເຮືອ ຫວຸ້ງອ່າງ ລາວ-ຫວຽດນາມ ມີໂຄງປະກອບຄືການຮ່ວມພັດທະນາລະຫວ່າງ ລັດ ແລະ ເອກະຊົນ ສັດສ່ວນການຖືຮຸ້ນ 51% - 49% ກໍຄືກະຊວງການເງິນຕາງໜ້າໃຫ້ລັດຖະບານລາວ ຖືຮຸ້ນ 51%, ເອກະຊົນ ຕາງໜ້າໂດຍ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ຖືຮຸ້ນ 49% ໂດຍໄລຍະເວລາການຮ່ວມມື 50 ປີ ສາມາດສືບຕໍ່ໄດ້ຕາມການ ເຫັນດີ ຂອງທັງສອງຝ່າຍ. ທ່ານ ຈັນທອນ ສິດທິໄຊ ປະທານກຸ່ມບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ທັງເປັນຮອງປະທານສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ລັດວິສາຫະກິດ ພັດທະນາທ່າເຮືອ ຫວຸ້ງອ່າງ ລາວ-ຫວຽດນາມ ໄດ້ມີຄຳເຫັນລາຍງານຫຍໍ້ກ່ຽວກັບແຜນການພັດທະນາທ່າເຮືອ ຫວຸ້ງອ່າງ ລາວ-ຫວຽດນາມ ໂດຍມີບາງຕອນທ່ານໄດ້ກ່າວວ່າ ໂຄງການທ່າເຮືອຫວຸ້ງອ່າງ ເປັນທ່າເຮືອນ້ຳເລິກທີ່ມີຄວາມສຳຄັນຫຼາຍ ທີ່ສຸດໃນການເຊື່ອມໂຍງການຄ້າໃນພູມີພາກ ແລະ ເປັນການຕອບສະໜອງນະໂຍບາຍຂອງ ລັດຖະບານ ສປປ ລາວ ເຮັດໃຫ້ ສປປ ລາວ ມີເສັ້ນທາງອອກສູ່ທະເລ, ກາຍເປັນທາງຜ່ານ ແລະ ຈຸດເຊື່ອມຕໍ່ໃນການຂົນສົ່ງເພື່ອຜັນປະໂຫຍດລວມຂອງພູມີພາກ.



ການລົງທຶນໃນການພັດທະນາ ທ່າເຮືອ ຫວຸ້ງອ່າງ ລາວ-ຫວຽດນາມ ເປັນການລົງທຶນໃນໄລຍະຍາວລະຫວ່າງລັດຖະບານແຫ່ງ ສປປ ລາວ ແລະ ບໍລິສັດເອກະຊົນ ທີ່ມີເຈົ້າຂອງເປັນຄົນລາວກໍຄື “ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ” ຊຶ່ງຈະຮອງຮັບ ໃຫ້ແກ່ການຂັບເຄື່ອນເສດຖະກິດ, ປະກອບເປັນອີກທ່າແຮງໜຶ່ງ ໃນການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ຢ່າງມີປະສິດທິຜົນສູງ. ທ່ານໄດ້ໃຫ້ຄຳໝັ້ນ ສັນຍາວ່າ ຈະຮ່ວມກັບຄະນະສະພາບໍລິຫານ ແລະ ຄະນະຜູ້ອຳນວຍການ ທຸກທ່ານທຸ້ມເທ ໝົດເຫື່ອແຮງ ແລະ ສະຕິປັນຍາ ຂອງຕົນ ເຂົ້າໃນການບໍລິຫານ, ຄຸ້ມຄອງ ແລະ ຂັບເຄື່ອນການ ດຳເນີນທຸລະກິດ ຂອງລັດວິສາຫະກິດໃຫ້ດຳເນີນໄປຕາມລະບຽບກົດໝາຍ, ຕາມເຈດຕະນາລົມ ຂອງລັດຖະບານທັງສອງປະເທດ ແລະ ຕາມແຜນຍຸດທະສາດການດຳເນີນທຸລະກິດ ຂອງລັດວິສາ ຫະກິດທີ່ໄດ້ວາງໄວ້.